**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໂຍທາທິການ ແລະ ຂົນສົ່ງ

ກົມນ້ຳປະປາ

ເລກທີ 243 /ກນປ

ນະຄອນຫລວງວຽງຈັນ, ວັນທີ 10 ເມສາ 2024

## ໜັງສືແຈ້ງເຊີນປະມູນ

**ເຊີນເຂົ້າຮ່ວມການປະມູນວັນທີ: 11 ເມສາ 2024.**

**ຊື່ຂອງໂຄງການ: ໂຄງການຂະຫຍາຍນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ.**

**ທຶນກູ້ຢືມ: ທະນາຄານໂລກອະນຸມັດເລກທີ: Credit Number 6375-LA.**

**ຊື່ຂອງສັນຍາ: ການກໍ່ສ້າງລະບົບນ້ຳປະປາກຸ່ມບ້ານ ຢູ່ເມືອງຫົວເມືອງ ແລະ ເມືອງຊ້ອນ, ແຂວງຫົວພັນ ແລະ ການກໍ່ສ້າງ ລະບົບນ້ຳປະປາກຸ່ມບ້ານ ຢູ່ເມືອງຊຳໃຕ້ ແລະ ເມືອງກ້ອນ, ແຂວງຫົວພັນ,**

**ລະຫັດສັນຍາເລກທີ: C1/W/26 ແລະ ລະຫັດສັນຍາເລກທີ: C1/W/27.**

**ປະຊຸມກ່ອນການເປີດຊອງປະມູນ: 3 ພຶດສະພາ 2024, ເວລາ 14:00 ໂມງ ທີ່ຫ້ອງປະຊຸມເບີ 3, ກະຊວງໂຍທາທິ ການ ແລະ ຂົນສົ່ງ**

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບເງິນກູ້ຢືມດອກເບ້ຍຕ່ຳ ຈາກທະນາຄານໂລກ ເພື່ອໃຊ້ຈ່າຍ ສຳລັບ ໂຄງການຂະຫຍາຍນ້ຳປະປາ, ສຸຂາພິບານ ແລະ ອານາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ ແລະ ມີ ຈຸດປະສົງນຳໃຊ້ທຶນເຂົ້າໃນການກໍ່ສ້າງລະບົບນ້ຳປະປາກຸ່ມບ້ານ ເພື່ອໃຫ້ປະຊາຊົນເຂົ້າເຖິງການບໍລິການ ນ້ຳປະປາ ທີ່ສະອາດ ແລະ ປອດໄພ.
2. ກະຊວງໂຍທາທິການ ແລະ ຂົນສົ່ງ, ກົມນ້ຳປະປາ, ຂໍເຊີນບັນດາບໍລິສັດທີ່ມີເງື່ອນໄຂເຂົ້າຮ່ວມ ການປະມູນເປີດ ກວ້າງພາຍໃນ ສຳລັບໂຄງການຂະຫຍາຍນ້ຳປະປາ, ສຸຂາພິບານ ແລະ ອານາໄມ ຢູ່ 4 ແຂວງພາກ ເໜືອ ຂອງ ສປປ ລາວ ລາຍລະອຽດຂອງສັນຍາໄດ້ລະບຸໄວ້ດັ່ງລຸ່ມນີ້:

| **ລະຫັດ ສັນຍາ** | **ຊື່ສັນຍາ** | **ສະຖານທີ່ກໍ່ສ້າງ** | **ວັນ ແລະ ເວລາ ໃນ ການຈັດຕັ້ງປະຕິບັດ ໃຫ້ສຳເລັດ** | **ວັນປິດຮັບຊອງປະມູນ** |
|---|---|---|---|---|
| C1/W/26 | ການກໍ່ສ້າງລະບົບນ້ຳປະປາ ກຸ່ມບ້ານ ຢູ່ເມືອງຫົວເມືອງ ແລະ ເມືອງຊ້ອນ, ແຂວງ ຫົວພັນ | ກຸ່ມບ້ານສົບເລົ່າ, ເມືອງ ຫົວເມືອງ ແລະ ກຸ່ມບ້ານ ເມືອງເປີ້, ເມືອງຊ້ອນ, ແຂວງຫົວພັນ | 10 ເດືອນ ຫຼັງຈາກ ເຊັນສັນຍາ | 21 ພຶດສະພາ 2024, ເວລາ 10:00 ໂມງ ທີ່ຫ້ອງປະຊຸມເບີ 3, ກະຊວງ ໂຍທາທິການ ແລະ ຂົນສົ່ງ |
| C1/W/27 | ການກໍ່ສ້າງລະບົບນ້ຳປະປາ ກຸ່ມບ້ານ ຢູ່ເມືອງຊຳໃຕ້ ແລະ ເມືອງກ້ອນ, ແຂວງ ຫົວພັນ | ກຸ່ມບ້ານພັນຊຳ, ເມືອງຊຳ ໃຕ້ ແລະ ກຸ່ມບ້ານເມືອງ ນາ, ເມືອງກ້ອນ, ແຂວງ ຫົວພັນ | 10 ເດືອນ ຫຼັງຈາກ ເຊັນສັນຍາ | 21 ພຶດສະພາ 2024, ເວລາ 14:00 ໂມງ ທີ່ຫ້ອງປະຊຸມເບີ 3, ກະຊວງ ໂຍທາທິການ ແລະ ຂົນສົ່ງ |

ເງື່ອນໄຂ ແລະ ຄຸນສົມບັດຂອງບໍລິສັດທີ່ສາມາດເຂົ້າຮ່ວມການປະມູນ ຊຶ່ງມີເງື່ອນໄຂພື້ນຖານ ດັ່ງລຸ່ມນີ້:

1) **ຊື່ຂອງສັນຍາ: ການກໍ່ສ້າງລະບົບນ້ຳປະປາກຸ່ມບ້ານ ຢູ່ເມືອງຫົວເມືອງ ແລະ ເມືອງຊ້ອນ, ແຂວງຫົວພັນ. ລະຫັດສັນຍາເລກທີ: C1/W/26.**

- ຄວາມອາດສາມາດດ້ານການເງິນ ຢ່າງໜ້ອຍ *550.000* ໂດລາສະຫະລັດ. (ຜູ້ປະມູນຈະຕ້ອງສະແດງຄວາມສາມາດທາງດ້ານການເງິນຂອງທັງ 2 ສັນຍາໂດຍແຍກກັນເປັນແຕ່ລະສັນຍາ ໃນກໍລະນີທີ່ຍື່ນຊອງປະມູນ 2 ສັນຍາ)
- ລາຍຮັບສະເລ່ຍປະຈຳປີ ໃນໄລຍະ 05 ປີຜ່ານມາ ແບບຕໍ່ເນື່ອງກັນ 5 ປີ ໃນລະຫວ່າງປີ (2015, 2016, 2017, 2018, 2019, 2020, 2021, 2022, 2023) ຢ່າງໜ້ອຍ *2.200.000* ໂດລາສະຫະລັດ (ຜູ້ປະມູນຈະຕ້ອງສະແດງຄວາມສາມາດທາງດ້ານການເງິນຂອງລາຍຮັບສະເລ່ຍປະຈຳປີຂອງທັງ 2 ສັນຍາ ໃນກໍລະນີທີ່ຍື່ນຊອງປະມູນ 2 ສັນຍາ).
- ປະສົບການສະເພາະວຽກກໍ່ສ້າງທົ່ວໄປຜ່ານມາ ພາຍໃນ 7 ປີ ຢ່າງໜ້ອຍ ຈຳນວນ 2 ສັນຍາ.
- ປະສົບການສະເພາະວຽກກໍ່ສ້າງ ແລະ ຄຸ້ມຄອງສັນຍາທີ່ຄ້າຍຄືກັນ (i) ກໍລະນີມີ 1 ສັນຍາ, ສັນຍາຕ້ອງມີມູນຄ່າຢ່າງນ້ອຍ *1.100.000* ໂດລາສະຫະລັດ (ii) ກໍລະນີມີ 2 ສັນຍາ ຫລື ຫລາຍກວ່າ, ແຕ່ລະສັນຍາຕ້ອງມີມູນຄ່າຢ່າງນ້ອຍ *770.000* ໂດລາສະຫະລັດ. ຕ້ອງມີປະສົບການໃນການກໍ່ສ້າງ ແລະ ຕິດຕັ້ງໂຮງງານຜະລິດນ້ຳປະປາ ໃນຮູບແບບສຳເລັດຮູບ ຫຼື ຮູບແບບທົ່ວໄປ (Conventional) ຂະໜາດກຳລັງການຜະລິດ ຢ່າງຕ່ຳ 240ມ$^3$/ວັນ, ຫຼື ຕອ້ງມີປະສົບການໃນການກໍ່ສ້າງຫົວງານ (intake), ຫຼື ການວາງທໍ່ ແລະ ຕິດຕັ້ງອຸປະກອນທໍ່.

2) **ຊື່ຂອງສັນຍາ: ການກໍ່ສ້າງລະບົບນ້ຳປະປາກຸ່ມບ້ານ ຢູ່ເມືອງຊຳໃຕ້ ແລະ ເມືອງກ້ອນ, ແຂວງຫົວພັນ. ລະຫັດສັນຍາເລກທີ: C1/W/27.**

- ຄວາມອາດສາມາດດ້ານການເງິນ ຢ່າງໜ້ອຍ *600.000* ໂດລາສະຫະລັດ. (ຜູ້ປະມູນຈະຕ້ອງສະແດງຄວາມສາມາດທາງດ້ານການເງິນຂອງທັງ 2 ສັນຍາໂດຍແຍກກັນເປັນແຕ່ລະສັນຍາ ໃນກໍລະນີທີ່ຍື່ນຊອງປະມູນ 2 ສັນຍາ).
- ລາຍຮັບສະເລ່ຍປະຈຳປີ ໃນໄລຍະ 05 ປີຜ່ານມາ ແບບຕໍ່ເນື່ອງກັນ 5 ປີ ໃນລະຫວ່າງປີ (2015, 2016, 2017, 2018, 2019, 2020, 2021, 2022, 2023) ຢ່າງໜ້ອຍ *2.300.000* ໂດລາສະຫະລັດ (ຜູ້ປະມູນຈະຕ້ອງສະແດງຄວາມສາມາດທາງດ້ານການເງິນຂອງລາຍຮັບສະເລ່ຍປະຈຳປີຂອງທັງ 2 ສັນຍາ ໃນກໍລະນີທີ່ຍື່ນຊອງປະມູນ 2 ສັນຍາ).
- ປະສົບການສະເພາະວຽກກໍ່ສ້າງທົ່ວໄປຜ່ານມາ ພາຍໃນ 7 ປີ ຢ່າງໜ້ອຍ ຈຳນວນ 2 ສັນຍາ.
- ປະສົບການສະເພາະວຽກກໍ່ສ້າງ ແລະ ຄຸ້ມຄອງສັນຍາທີ່ຄ້າຍຄືກັນ (i) ກໍລະນີມີ 1 ສັນຍາ, ສັນຍາຕ້ອງມີມູນຄ່າຢ່າງນ້ອຍ *1.200.000* ໂດລາສະຫະລັດ (ii) ກໍລະນີມີ 2 ສັນຍາ ຫລື ຫລາຍກວ່າ, ແຕ່ລະສັນຍາຕ້ອງມີມູນຄ່າຢ່າງນ້ອຍ *800.000* ໂດລາສະຫະລັດ. ຕ້ອງມີປະສົບການໃນການກໍ່ສ້າງ ແລະ ຕິດຕັ້ງໂຮງງານຜະລິດນ້ຳປະປາ ໃນຮູບແບບສຳເລັດຮູບ ຫຼື ຮູບແບບທົ່ວໄປ (Conventional) ຂະໜາດກຳລັງການຜະລິດ ຢ່າງຕ່ຳ 240ມ$^3$/ວັນ, ຫຼື ຕອ້ງມີປະສົບການໃນການກໍ່ສ້າງຫົວງານ (intake), ຫຼື ການວາງທໍ່ ແລະ ຕິດຕັ້ງອຸປະກອນທໍ່.

3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ຕາມທີ່ໄດ້ລະບຸໄວ້ໃນຄູ່ມື ແນະນຳຂອງທະນາຄານໂລກວ່າດ້ວຍ: ການຈັດຊື້ສິນຄ້າ, ການກໍ່ສ້າງ-ສ້ອມແປງ ແລະ ການບໍລິການ ທີ່ບໍ່ແມ່ນດ້ານທີ່ປຶກສາ, ພາຍໃຕ້ການກູ້ຢືມເງິນ IDA ຈາກທະນາຄານ ("ຄູ່ມືການຈັດຊື້-ຈັດຈ້າງ"), ແລະ ເປີດໃຫ້ຜູ້ປະມູນທຸກໆຄົນຕາມທີ່ໄດ້ລະບຸໄວ້ໃນປຶ້ມຄູ່ມືຈັດຊື້-ຈັດຈ້າງ. ພ້ອມກັນນັ້ນ, ໃຫ້ເບິ່ງ ຂໍ້ແນະນຳສຳລັບຜູ້ປະມູນຂໍ້ ITB 4.3 ທີ່ກຳນົດໄວ້ໃນນະໂຍບາຍຂອງທະນາຄານໂລກວ່າດ້ວຍການຂັດແຍ່ງທາງດ້ານຜົນປະໂຫຍດ.
4. ບັນດາບໍລິສັດທີ່ມີຄວາມເໝາະສົມ ສາມາດພົວພັນຮັບຂໍ້ມູນຈາກ ໜ່ວຍງານຄຸ້ມຄອງໂຄງການ ຂອງໂຄງການຂະຫຍາຍນ້ຳປະປາ, ສຸຂາພິບານ ແລະ ອານາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ ທີ່ຂຶ້ນກັບ ກົມນ້ຳປະປາ ກະຊວງໂຍທາທິການ ແລະ ຂົນສົ່ງ ຕາມທີ່ຢູ່ຂ້າງລຸ່ມນີ້ ໃນໂມງລັດຖະການ (ເວລາ 08:00 ຫາ 12:00 ໂມງ ແລະ 13:00 ຫາ 16:00 ໂມງ).

5. ບໍລິສັດທີ່ມີຄວາມສົນໃຈ ສາມາດຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ທີ່ໂຄງການຂະຫຍາຍນ້ຳປະປາ, ສຸຂາພິບານ ແລະ ອານາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ (ຕຶກສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ) ຊັ້ນ 4, ຖະໜົນ ດົງປ່າລານ, ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ ລາຄາຊອງປະມູນ ຕໍ່ໜຶ່ງສັນຍາ 2.500.000 ກີບ (ສອງລ້ານຫ້າແສນກີບ) ວິທີຊຳລະເປັນຮູບແບບເງິນສົດ, ເງິນດັ່ງກ່າວຈະບໍ່ຖືກສົ່ງຄືນ ທຸກກໍລະນີ.
6. ຊອງປະມູນຈະຕ້ອງສົ່ງຫາບ່ອນຢູ່ຂ້າງລຸ່ມນີ້ ຫ້ອງປະຊຸມກະຊວງ ເບີ 3, ກະຊວງໂຍທາທິການ ແລະ ຂົນສົ່ງ, ຖະໜົນລ້ານຊ້າງ ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ, ສປປ ລາວ **ກ່ອນເວລາ 10:00 ໂມງ ຂອງວັນທີ 21 ພຶດສະພາ 2024 ສຳລັບລະຫັດສັນຍາເລກທີ: C1/W/26 ແລະ ກ່ອນເວລາ 14:00 ໂມງ ຂອງວັນທີ 21 ພຶດສະພາ 2024 ສຳລັບລະຫັດສັນຍາເລກທີ: C1/W/27.** ການສົ່ງດ້ວຍລະບົບເອເລັກໂຕຼນິກ ຈະບໍ່ອະນຸຍາດ. ເອກະສານປະມູນທີ່ສົ່ງຊ້າຈະຖືກປະຕິເສດ. ການປະມູນຈະເປີດຕໍ່ສາທາລະນະໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈເຂົ້າຮ່ວມຢູ່ສະຖານທີ່ໆກຳນົດໄວ້ຂ້າງລຸ່ມນີ້.
7. ທຸກໆເອກະສານຈະຕ້ອງປະກອບແຈ້ງການຄ້ຳປະກັນການປະມູນດ້ວຍກຽດ (Bid Securing Declaration).
8. ສະຖານທີ່ຍື່ນຊອງປະມູນ:

   ຫ້ອງປະຊຸມກະຊວງ ເບີ 3, *ກະຊວງໂຍທາທິການ ແລະ ຂົນສົ່ງ*,
   ຖະໜົນລ້ານຊ້າງ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ, ສປປ ລາວ
   ໂທລະສັບ : +856 21 452167; ອີເມວ: swsshp.procurement@gmail.com
   ທ່ານ ຈັນເທພາ ຂັດຕິຍະວົງ, ຫົວໜ້າໂຄງການ.

**ຫົວໜ້າກົມ**

ສົມປອງ ສິດທິວົງ